ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------000---------

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ຄະນະກຳມະການດັດສົມທຸລະກິດນ້ຳປະປາ ເລກທີ________/ຄດນປ

ນະຄອນຫຼວງວຽງຈັນ, ວັນທີ ____________

# ບົດບັນທຶກ

## ກ່ຽວກັບ ຜົນສຳເລັດ ຂອງ ກອງປະຊຸມຄັ້ງປະຖົມມະເລີກ ຂອງ ຄະນະກຳມະການດັດສົມທຸລະກິດ ນ້ຳປະປາ ຄັ້ງວັນທີ 25 ມີນາ 2009.

ກອງປະຊຸມຄັ້ງປະຖົມມະເລີກ ຂອງຄະນະກຳມະການດັດສົມທຸລະກິດນ້ຳປະປາ ໄດ້ໄຂຂຶ້ນ ເວລາ 8:30 ໂມງ ຂອງວັນທີ 25 ມີນາ 2009, ໂດຍເປັນປະທານ ຂອງ ທ່ານ ສົມທິງ ທອງແກ້ວ, ລັດຖະມົນຕີຊ່ວຍວ່າການ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ປະທານ ຄະນະກຳມະການດັດສົມທຸລະກິດນ້ຳປະປາ, ໂດຍມີບັນດາ ທ່ານ ໃນຄະນະກຳມະການດັດສົມທຸລະກິດນ້ຳປະປາ ຈຳນວນໜຶ່ງ, ຜູ້ຕ່າງໜ້າຄະນະກຳມະບານກະຊວງ ພ້ອມດ້ວຍ ພະນັກງານ ທີ່ກ່ຽວຂ້ອງ ຂອງກົມເຄຫາ ແລະ ຫ້ອງການດັດສົມນ້ຳປະປາເຂົ້າຮ່ວມ.

ຈຸດປະສົງເປົ້າໝາຍຫລັກ ຂອງກອງປະຊຸມດັ່ງກ່າວແມ່ນ:

1. ປຶກສາຫາລື ແລະ ທົບທວນຄືນ ບັນດາ ໜ້າວຽກທີ່ອີງການນ້ຳປະປາ ຫຼື ຫ້ອງການດັດສົມນ້ຳປະປາ ໃນປະຈຸບັນໄດ້ເຮັດຜ່ານມາ.
2. ປຶກສາຫາລື ກ່ຽວກັບ ການປັບປຸງ ຫ້ອງການດັດສົມນ້ຳປະປາ ເຊິ່ງເຫັນວ່າ ໃນໄລຍະຜ່ານມາມີບາງດ້ານຍັງບໍ່ທັນຈະແຈ້ງ.
3. ຜ່ານໂຄງການດຳເນີນງານ ຂອງຫ້ອງການດັດສົມໃນຕໍ່ໜ້າ.

ການດຳເນີນກອງປະຊຸມດັ່ງກ່າວ ແມ່ນໄດ້ໄປຕາມວາລະ ຂອງກອງປະຊຸມຕາມທີ່ໄດ້ວາງໄວ້.

ໃນກອງປະຊຸມປະທານຄະນະກຳມະການດັດສົມທຸລະກິດນ້ຳປະປາ (ປະທານກອງປະຊຸມ) ໄດ້ຊີ້ນຳ, ເຈາະຈີ້ມ ໃຫ້ທິດ ແກ່ການຄົ້ນຄວ້າປະກອບຄຳຄິດຄຳເຫັນ.

ຜ່ານການປະກອບຄຳຄິດຄຳເຫັນໄດ້ມີຄວາມເປັນເອກະພາບ ແລະ ຕົກລົງຮັບຮອງເອົາ ບັນດາບັນຫາດັ່ງນີ້:

1. ເຫັນດີເປັນເອກະພາບ ກັບ ໂຄງຮ່າງ ດຳເນີນງານ ຂອງ ຫ້ອງການດັດສົມນ້ຳປະປາ, ແຕ່ຕ້ອງໄດ້ສ້າງເປັນແຜນລະອຽດ ສຳລັບ ການຈັດຕັ້ງປະຕິບັດ ແຕ່ລະວຽກ ແລະ ແຕ່ລະໄລຍະ.

2. ເຫັນດີປະຕິບັດຕາມຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ ກະຊວງ ຍທຂ ສະບັບເລກທີ 13266/ຍທຂ, ລົງວັນທີ 22 ຕຸລາ 2008 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ຫ້ອງການດັດສົມນ້ຳປະປາ ພ້ອມນັ້ນກໍ່ເຫັນດີ ເປັນເອກະພາບ ສະເໜີແຕ່ງຕັ້ງຫົວໜ້າ ແລະ ຮອງຫົວໜ້າ ຫ້ອງການດັດສົມນ້ຳປະປາ ຄົນໃໝ່ ໂດຍສົມທົບ ເຫັນດີເປັນເອກະພາບ ກັບ ກົມເຄຫາ ແລະ ຜັງເມືອງ.

ກອງປະຊຸມໄດ້ປິດລົງ ໃນເວລາ 10:30 ໂມງ ຂອງວັນດຽວກັນນັ້ນ.

ຜູ້ບັນທຶກກອງປະຊຸມ

ລັດຖະມົນຕີຊ່ວຍວ່າການກະຊວງ ໂຍທາທິການ ແລະ ຂົນສົ່ງ
ປະທານຄະນະກຳມະການດັດສົມທຸລະກິດນ້ຳປະປາ